California Deaf-Blind Services
ໜ່ວຍບໍລິການ
ຜູ້ພິການທັງຫູແລະຕາ
ແຫ່ງຣັຖຄາລີຟໍນີ
ພາຍໃນຣັຖຄາລີຟໍນີ (415) 405-7560

# ຄຳແຈ້ງຂໍ້ມູນຕ່າງ ໆ

## ການເຕືອນດ້ວຍການສຳຜັດ

ຜູ້ທີ່ບໍ່ສູ້ມີຄວາມສາມາດທີ່ຈະໄດ້ຮັບປະໂຍດຈາກການໃຊ້ສາຍຕາແລະຫູຂອງຕົນ ມັກບໍ່ສາມາດເຂົ້າໃຈສິ່ງທີ່ກຳລັງຈະເກີດຂຶ້ນກັບໂຕເອງໄດ້. ທຸກສິ່ງທຸກຢ່າງສເມືອນກັບປາກົດຂຶ້ນມາຈາກບ່ອນໃດກໍບໍ່ຮູ້ ແລະຫາຍໄປໃສກໍບໍ່ຮູ້ເຊັ່ນດຽວກັນ. ຜູ້ຄົນມາແຕະຕ້ອງແລະຂົນຍ້າຍນັກຮຽນໂດຍບໍ່ເຕືອນລ່ວງໜ້າແລະບໍ່ມີເຫດຜົນທີ່ຊາບໄດ້ຢ່າງແນ່ນອນ. ນັກຮຽນເຫລົ່ານັ້ນ ມັກຈະໃຊ້ອາຣົມຢ່າງຮ້າຍແຮງຢູ່ເຣື່ອຍ ແລະອາດວິຕົກກັງວົນເມື່ອຄົນມາທຳເຊັ່ນນີ້. ການເຕືອນລ່ວງໜ້າດ້ວຍການສຳຜັດນັ້ນ ແມ່ນວິທີນຶ່ງສຳຫຣັບການໃຫ້ນັກຮຽນຊາບເຖິງສິ່ງທີ່ກຳລັງຈະເກີດຂຶ້ນ.

ຈຸດປະສົງໃນການເຕືອນດ້ວຍການສຳຜັດນັ້ນ ແມ່ນການມອບວິທີໃຫ້ແກ່ຜູ້ທີ່ພິການທັງຫູແລະຕາທີ່ຈະສາມາດເຂົ້າໃຈເຖິງສິ່ງທີ່ທຳ, ບຸກຄົນ ແລະສະຖານທີ່ຕ່າງ ໆ ໄດ້ໂດຍໃຊ້ການສຳຜັດແລະ/ຫລືການເໜັງຕີງ.

ການເຕືອນດ້ວຍການສຳຜັດນັ້ນ ແມ່ນສັນຍານທີ່ໃຫ້ກັບຮ່າງກາຍຂອງຜູ້ໃດຜູ້ນຶ່ງເພື່ອບອກສິ່ງໃດສິ່ງນຶ່ງທີ່ເຈາະຈົງ (ຕົວຢ່າງເຊັ່ນ ຜູ້ໃຫຍ່ວາງມືເທິງບ່າເພື່ອສັ່ງໃຫ້ "ນັ່ງລົງ"). ພໍ່ແມ່ແລະຄູມັກໃຊ້ການເຕືອນດັ່ງກ່າວຫລາຍແນວກັບນັກຮຽນວັຍເດັກທີ່ພິການທັງຫູແລະຕາ. ພໍ່ແມ່ມັກຈະແຕະຕ້ອງທາຣົກຂອງຕົນດ້ວຍວິທີໃດວິທີນຶ່ງຢ່າງເປັນກັນເອງກ່ອນທີ່ຈະອູ້ມເດັກຫລືຍ້າຍໄປຢູ່ອີກບ່ອນນຶ່ງ. ການເຕືອນລ່ວງໜ້າດັ່ງກ່າວ ເມື່ອຈະທຳຫລາຍເທື່ອດ້ວຍວິທີອັນດຽວກັນ ທຳໃຫ້ນັກຮຽນຊາບໄດ້ວ່າ ມີຜູ້ໃດຜູ້ນຶ່ງກຳລັງຢູ່ໃກ້ຕົວເຂົາ ແລະເຫດການໃດເຫດການນຶ່ງກຳລັງຈະເກີດຂຶ້ນ. ຜູ້ທີ່ເຂົ້າມາແຕະຕ້ອງຫລືຍ້າຍນັກຮຽນ ແຕ່ລະຄົນຕ່າງມັກຈະປະຕິບັດຢ່າງໃດຢ່າງນຶ່ງທີ່ຜິດແປກຈາກຄົນອື່ນໜ້ອຍນຶ່ງ ຫລືມັກຈະແຕະຕ້ອງສ່ວນໃດສ່ວນນຶ່ງຂອງຮ່າງກາຍ ເພື່ອໃຫ້ນັກຮຽນຊາບວ່າ ຜູ້ເຂົ້າມາໃກ້ແມ່ນໃຜ (ຕົວຢ່າງເຊັ່ນ ແມ່ຈັບຄາງ, ພໍ່ຈັບໜ້າຜາກ, ຜູ້ໃຫຍ່ຊ່ວຍນັກຮຽນລູບຄຳເສັ້ນຜົມ, ແຫວນ ຫລືນາລິກາ ເປັນຕົ້ນ).

ການເຕືອນດ້ວຍການສຳຜັດຢ່າງສມ່ຳສເມີໃນຣະຫວ່າງການທຳສິ່ງທີ່ທຳທຸກວັນເປັນປະຈຳ ທຳໃຫ້ນັກຮຽນເຂົ້າໃຈເຖິງສິ່ງແວດລ້ອມທີ່ຢູ່ຮອບຕົວເຂົາເອງ ແລະຜູ້ທີ່ຕົນໄດ້ພົບໃນຊີວິດປະຈຳວັນຂອງຕົນ.

ນັກຮຽນແຕ່ລະຄົນ ຕ່າງຕ້ອງການໄດ້ຮັບການເຕືອນລ່ວງໜ້າໄວ້ເປັນຊຸດທີ່ເຈາະຈົງ ທີ່ເໝາະກັບສະຖານະການຂອງຕົນທັງໃນເຮືອນ, ໂຮງຮຽນ ແລະບ່ອນເຮັດວຽກ. ສິ່ງທີ່ສຳຄັນເປັນຢ່າງຍິ່ງ ຄື ຊັກຊວນທຸກຄົນທີ່ທຳງານກັບນຽກຮຽນຜູ້ນັ້ນ ໃຫ້ໃຊ້ການເຕືອນແບບດຽວກັນ ເພື່ອຊ່ວຍໃຫ້ນັກຮຽນເຂົ້າໃຈຄວາມໝາຍຂອງສັນຍານເຕືອນນັ້ນ.

ຄຳແຈ້ງຂໍ້ມູນຈາກ California Deaf-Blind Services (ໜ່ວຍບໍຣິການຜູ້ພິການທັງຫູແລະຕາແຫ່ງຣັຖຄາລີຟໍນີ ຫລື CDBS) ເຫລົ່ານີ້ ຈັດທຳເພື່ອທີ່ຈະນຳໄປໃຊ້ປະໂຍດໄດ້ທັງໂດຍຄອບຄົວແລະໂດຍຜູ້ປະກອບອາຊີບທີ່ຮັບໃຊ້ບໍຣິການຜູ້ທີ່ພິການທັງຫູທັງຕາ. ຂໍ້ມູນດັ່ງກ່າວໃຊ້ໄດ້ກັບນັກສຶກສາຕັ້ງແຕ່ເກີດມາຈົນເຖິງໄດ້ຄົບອາຍຸ 22 ປີບໍຣິບູນ. ວັດຖຸປະສົງຂອງຄຳແຈ້ງຂໍ້ມູນແຕ່ລະສະບັບ ແມ່ນໃຫ້ຄວາມຮູ້ໂດຍທົ່ວໄປໃນເຣື່ອງໃດເຣື່ອງນຶ່ງຢ່າງເຈາະຈົງ. ນັກສຶກສາແຕ່ລະທ່ານ ສາມາດຂໍທາບຣາຍລະອຽດເພີ້ມເຕີມໄດ້ໂດຍຜ່ານການຊ່ວຍເຫລືອທາງວິທຍາການສະເພາະຣາຍທີ່ໃຫ້ໂດຍ CDBS. ຄຳແຈ້ງຂໍ້ມູນນີ້ ຈຶ່ງນັບເປັນຈຸດເຣີ່ມຕົ້ນສຳຫຣັບການໄດ້ຮັບຊາບຣາຍລະອຽດຕໍ່ໄປ.